# ຂໍ້ເທັດຈິງກ່ຽວກັບເຊື້ອໂຣຄ Staphylococcus ຫລື Methicillin-Resistant Staphylococcus Aureus (MRSA)

*ໃຫ້ຂ່າວນີ້ໂດຍ ສູນກາງຄວບຄຸມພຍາດ (Center for Disease Control)*

## ເຊື້ອໂຣຄ Staphylococcus Aureus ຫລື Staph ແມ່ນຫຍັງ?

ສແຕຟ (Staph) ແມ່ນເຊື້ອໂຣຄຊະນິດນຶ່ງ. ທີ່ອາດເກີດຂຶ້ນກັບຜິວຫນັງເບິ່ງຄ້າຍຄື ສິວ ຫລື ນໍ້າຮ້ອນລວກ. ຜິວຫນັງທີ່ຕິດເຊື້ອໂຣຄນີ້ອາດເຫັນເປັນສີແດງ, ໃຄ່ຟອງ, ເຈັບ, ຫລື ມີຫນອງ ຫລື ມີນໍ້າເຫລືອງອື່ນໆ. ເຊື້ອໂຣຄສແຕຟບາງຢ່າງ (ທີ່ຮູ້ກັນວ່າ Methicillin-Resistant Staphylococcus Aureus ຫລື MRSA) ນັ້ນແມ່ນຕ້ານກັບຢາທີ່ໃຊ້ປາບເຊື້ອໂຣຄບາງຢ່າງ, ຊຶ່ງເຮັດໃຫ້ຮັກສາປິ່ນປົວຍາກ. ລາຍລະອຽດຢູ່ໃນຫນ້ານີ້ແມ່ນໃຊ້ກັບເຊື້ອໂຣຄທັງສອງຢ່າງ Staph ແລະ MRSA.

## ພວກໃດມັກຕິດເຊື້ອໂຣຄ Staph ນີ້?

ເຊື້ອໂຣຄ Staph ນີ້ສາມາດຕິດໄດ້ກັບຄົນທົ່ວໄປ. ຜູ້ມີສຸຂພາບດີນັ້ນ ນ້ອຍທີ່ສຸດທີ່ຈະຕິດເຊື້ອໂຣຄ MRSA ນີ້. ຄົນສ່ວນຫລາຍມັກຕິດເຊື້ອໂຣຄ Staph ນີ້ ເມື່ອ:

- ຜິວຫນັງ – ກັບ – ຜິວຫນັງສຳພັດກັນ ກັບຄົນມີເຊື້ອໂຣຄ Staph.
- ສຳພັດ ກັບເຄື່ອງຂອງ ຫລື ບ່ອນທີ່ມີເຊື້ອໂຣຄ Staph ຕິດຢູ່.
- ມີບາດແຜຢູ່ຜິວຫນັງທີ່ບໍ່ປົກປິດໄວ້ ເຊັ່ນວ່າ ຜິວຫນັງມີບາດແຜ ຫລື ມີຮອຍຂູດເກົາຕ່າງໆ.
- ຢູ່ອາສັຍໃນບ່ອນຄັບແຄບຫນາແຫນ້ນຫລາຍຄົນ.
- ບໍ່ມີຄວາມສະອາດພຽງພໍ.

## ອາການຕິດເຊື້ອໂຣຄ Staph ນີ້ຮ້າຍແຮງປານໃດ?

ຜິວຫນັງທີ່ຕິດເຊື້ອໂຣຄ Staph ນີ້ ສ່ວນມາກຈະບໍ່ຮ້າຍແຮງ ແລະ ປິ່ນປົວກໍຫາຍໄວ. ເຊື້ອໂຣຄ Staph ນີ້ສາມາດມີອາການຮ້າຍແຮງຄືກັນ ເຊັ່ນວ່າ ການຕິດເຊື້ອໂຣຄທາງເສັ້ນເລືອດ, ທາງການຜ່າຕັດ, ຫລື ທາງການເປັນໂຣຄປອດບວມ. ບາງເທື່ອເຊື້ອໂຣຄນີ້ເລີ້ມຂຶ້ນທາງຜິວຫນັງກໍ່ອາດຈະຮ້າຍແຮງຄືກັນ. ສຳຄັນທີ່ສຸດຄື, ເມື່ອເຫັນວ່າເຊື້ອໂຣຄປຽວຢາບໍ່ດີຂຶ້ນນັ້ນ ໃຫ້ຕິດຕໍ່ຫາທ່ານຫມໍທັນທີ.

## ຈະປິ່ນປົວຮັກສາເຊື້ອໂຣຄ Staph ນີ້ແນວໃດ?

ການຮັກສາເຊື້ອໂຣຄສແຕຟຜິວຫນັງນີ້ ຮວມທັງກິນຢາປາບເຊື້ອໂຣຄ ຫລື ແພທຈູດຫນອງອອກ. ຖ້າຫມໍສັ່ງໃຫ້ກິນຢາປາບເຊື້ອໂຣຄ (antibiotic) ນັ້ນ, ຕ້ອງໄດ້ກິນຢາເຕັມກຳນົດຕາມຫມໍສັ່ງທຸກຢ່າງ, ເຖິງວ່າການຕິດເຊື້ອໂຣຄຫາຍລົງກໍຕາມ, ນອກຈາກວ່າທ່ານຫມໍສັ່ງໃຫ້ທ່ານຢຸດກິນຢາເທົ່ານັ້ນ. ຢ່າແບ່ງປັນຢາປາບເຊື້ອໂຣຄນີ້ ກັບຄົນອື່ນໆ ຫລື ເກັບຮັກສາໄວ້ໃຊ້ເທື່ອຫນ້າ.

## ຈະເຮັດແນວໃດບໍ່ໃຫ້ເຊື້ອໂຣຄ Staph ນີ້ຕິດຕໍ່ໄປຫາຄົນອື່ນ?

- ລ້າງມືເປັນປະຈຳ ຫລື ໃຊ້ເຫລົ້າອະນາມັຍລ້າງມື.
- ຮັກສາບາດແຜ ແລະ ຮອຍຂູດເກົາໃຫ້ສະອາດ ແລະ ໃຊ້ຜ້າຕິດແຜ (bandages) ຕິດປົກໄວ້.
- ຢ່າຈັບບາຍບາດແຜ ຫລື ຜ້າຕິດແຜຂອງຄົນອື່ນ.
- ຢ່າໃຊ້ເຄື່ອງໃຊ້ສ່ວນຕົວຮ່ວມກັນ, ເຊັ່ນວ່າ ຜ້າເຊັດຫນ້າ ຫລື ມີດແຖ.

## ສູນກາງສຶກສາທຳການປ້ອງກັນ ພວກນັກຮຽນ ແລະ ພະນັກງານແນວໃດແດ່?

ສູນກາງສຶກສາແຊນດິເອໂກ ມີລະບຽບການລະອຽດກ່ຽວກັບການປ້ອງກັນ ແລະ ການຊີ້ແຈງ ເຊື້ອໂຣຄ Staph ແລະ MRSA ຢູ່ໃນ ໂຮງຮຽນ. ທານສາມາດອ່ານໄດ້ທີ່ *http://www.sandi.net/depts/nursing_wellness/forms/mrsa.pdf.*

ຖ້າທ່ານມີຄຳຖາມກ່ຽວກັບສຸຂພາບໃນຄອບຄົວຂອງທ່ານນັ້ນ, ຂໍໃຫ້ສອບຖາມກັບທ່ານຫມໍຂອງທ່ານ. ລາຍລະອຽບເພີ້ມເຕີມອ່ານໄດ້ທີ່, www.cdc.gov.